PA
– ທີສາດລາພະນ່
17/12/18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 51 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 13 ທັນວາ 2018

ສຳນັກງານ ຄຄຊ
ເລີ່ມ ເລກ 1312
ວັນທີ 17 DEC 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 26-30/11/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,09% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກອັດຕາສ່ວນການວ່າງງານຂອງປະເທດເຢຍລະມັນ ຊຶ່ງເປັນສະມາຊິກຂອງສະຫະພາບເອີຣົບ ເພີ່ມຂຶ້ນຢູ່ໃນລະດັບ 8,1% ໃນເດືອນ 10/2018 ຊຶ່ງຄາດຄະເນໄວ້ວ່າຈະຢູ່ທີ່ລະດັບ 8,0% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກອັດຕາລາຍຮັບສ່ວນບຸກຄົນຂອງ ສ. ອາເມລິກາ ເພີ່ມຂຶ້ນຢູ່ໃນລະດັບ 0,5% ໃນເດືອນ 10/2018 ຊຶ່ງຄາດຄະເນວ່າຈະຢູ່ທີ່ລະດັບ 0,4% ໃນເດືອນຜ່ານມາ .

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19-23/11/2018 | ອາທິດນີ້ 26-30/11/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1380 | 1,1370 | 0,09% |
| ເຢນ/ໂດລາ | 112,82 | 113,49 | -0,59% |
| ບາດ/ໂດລາ | 33,060 | 32,880 | 0,55% |
| ເປໂຊ/ໂດລາ | 52,39 | 52,41 | -0,05% |
| ຣູເປັຍ/ໂດລາ | 14.545,00 | 14.300,00 | 1,71% |
| ໂດລາສິງກະໂປ/ໂດລາ | 1,3750 | 1,3709 | 0,30% |
| ຢວນ/ໂດລາ | 6,9466 | 6,9438 | 0,04% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 5,51% ເປັນ 50,92 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ ມາຢູ່ໃນລະດັບ 3,58 ລ້ານບາເຣວ ໃນອາທິດທີ 23/11/2018 ຈາກເພີ່ມຂຶ້ນຮອດລະດັບ 4,85 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 0,05% ເປັນ 1.223,87 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0,04% ແລະ ແຂງຄ່າຂຶ້ນ 0,02% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,79% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,05% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 19-23/11/2018 | | | ອາທິດນີ້ 26-30/11/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.631,14 | 8.655,83 | 8.643,24 | 8.628,23 | 8.650,98 | 8.639,91 | 0,03% | 0,06% | 0,04% | -3,79% | -3,75% | -3,79% |
| ບາດ | 266,22 | 267,49 | 267,00 | 266,42 | 267,43 | 266,96 | -0,07% | 0,02% | 0,02% | -4,27% | -3,99% | -4,05% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,39% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 12,20%;
- ປະລິມານເງິນ M2 ຫຼຸດລົງ 0,08% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,19%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (23-29/11/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 9,70 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 31,64 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 21,94 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 479,07 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 168,25 ລ້ານບາດ ແລະ ຂາຍເງິນບາດໄດ້ 647,32 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 5,22% ແຕ່ ເງິນບາດ ເພີ່ມຂຶ້ນ 37,19%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 4,19 ລ້ານໂດລາ ແລະ ດູດຊຶມໂດຍການຂາຍເງິນບາດສຸດທິ ຈຳນວນ 22,40 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,72 ລ້ານໂດລາ ແລະ ເງິນບາດ ຈຳນວນ 21,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 16-22/11/2018 | | ອາທິດນີ້ 23-29/11/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **18,38** | **149,40** | **31,64** | **168,25** | **43,88%** | **-1,81%** |
| - ທ/ຄທຸລະກິດລັດ | 7,55 | 66,72 | 12,56 | 90,65 | 27,00% | 14,27% |
| - ທ/ຄທຸລະກິດອື່ນໆ | 10,83 | 82,68 | 19,08 | 77,60 | 57,69% | -15,68% |
| **2. ການຂາຍເງິນຕາຕ່າງປະເທດ** | **18,63** | **385,18** | **21,94** | **647,32** | **-36,48%** | **52,99%** |
| - ທ/ຄທຸລະກິດລັດ | 7,87 | 124,84 | 12,23 | 160,68 | 8,33% | 10,93% |
| - ທ/ຄທຸລະກິດອື່ນໆ | 10,76 | 260,34 | 9,71 | 486,64 | -58,24% | 74,89% |
| **ຊື້-ຂາຍສຸດທິ ທທກ** | **-0,25** | **-235,78** | **9,70** | **-479,07** | **-177,29%** | **90,30%** |
| - ຜິດດ່ຽງຊື້-ຂາຍ | -1,36% | -157,82% | 30,66% | -284,74% | -153,72% | 93,82% |
| **- ມູນຄ່າການຊື້-ຂາຍ** | **37,01** | **534,58** | **53,58** | **815,57** | **-5,22%** | **37,19%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-3,16** | **480,73** | **-4,19** | **-22,40** | | |
| - ທຫລ ຊື້ຈາກ ທທກ | 0,10 | 500,00 | 0,90 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,26 | 19,27 | 5,09 | 22,40 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **2,07** | **40,00** | **3,72** | **21,00** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 11/2018 ຄາດວ່າຈະຢູ່ໃນລະດັບ 3,17%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 31,25 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (23-29/11/2018) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ມີຈຳນວນ 178,26 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 132,58 ລ້ານໂດລາສະຫະລັດ, ຊຳລະເງິນກູ້ຢືມຈາກຕ່າງປະເທດ ຈຳນວນ 13,73 ລ້ານໂດລາສະຫະລັດ ແລະ ຈ່າຍຄ່າບໍລິການ ຈຳນວນ 11,62 ລ້ານໂດລາສະຫະລັດ), ສຳລັບກະແສເງິນໄຫຼເຂົ້າ ແມ່ນມີຈຳນວນ 147,02 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 95,55 ລ້ານໂດລາສະຫະລັດ, ຈາກການໃຫ້ບໍລິການ ຈຳນວນ 24,60 ລ້ານໂດລາສະຫະລັດ ແລະ ຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 10,35 ລ້ານໂດລາສະຫະລັດ).

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 659 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 89 ສະບັບ ເທົ່າກັບ 11,90% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 369,95 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 112,23 ຕື້ກີບ ເທົ່າກັບ 43,55%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (23-29/11/2018) ມີທັງໝົດ 4.732 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 4.465 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 92 ຕື້ກີບ ຈາກ 1.424,26 ຕື້ກີບ ມາເປັນ 1.516,30 ຕື້ກີບ ເທົ່າກັບ 6,46%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 267 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 8,34 ຕື້ກີບ ຈາກ 182,45 ຕື້ກີບ ມາເປັນ 190,79 ຕື້ກີບ ເທົ່າກັບ 4,57%.

4. **ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 827,43 ຈຸດ ເພີ່ມຂຶ້ນ ຈາກ 826,89 ຈຸດ ຫຼື ເທົ່າກັບ 0,07% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 401.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1.72 ຕື້ກີບ ຫຼຸດລົງ 58,82% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 69,66% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ BCEL.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 87.800 | 486.360.000 | 5.600 | **101.500** | **560.960.000** | **5.550** | 15,60 | 15,34 | 0,91 |
| **EDL-GEN** | 912.500 | 3.650.295.000 | 4.000 | **273.400** | **1.093.610.000** | **4.000** | -70,04 | -70,04 | - |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | - | - | 1.500 | **300** | **450.000** | **1.500** | - | - | - |
| **SVN** | - | - | 1.650 | - | - | **1.650** | - | - | - |
| **PCD** | - | - | 1.200 | **100** | **120.000** | **1.200** | - | - | - |
| **LCC** | 4.400 | 7.800.000 | 1.800 | **1.000** | **1.700.000** | **1.700** | -77,27 | -78,21 | -5,56 |
| **MHTL** | 15.600 | 43.795.000 | 2.900 | **24.100** | **68.140.000** | **2.900** | 54,49 | 55,59 | - |
| **LAT** | 3.100 | 2.165.000 | 700 | **1.000** | **700.000** | 700 | -67,74 | -67,67 | - |
| **ທັງໝົດ** | **1.023.400** | **4.190.415.000** | | **401.400** | **1.725.680.000** | | **-60,78** | **-58,82** | |

5. **ວຽກງານອື່ນໆທີ່ພົ້ນເດັ່ນ.**

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສາມັນຂອງສະພາແຫ່ງຊາດ ເທື່ອທີ່ 6 ຊຸດທີ VIII, ❷ ກອງປະຊຸມປະຈຳປີ ສະພາຜູ້ວ່າການ SEACEN, ❸ ກອງປະຊຸມທາງດ້ານບົດບາດຂອງການສຶກສາທາງດ້ານການເງິນ ແລະ ການປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນ ໃນການສະໜັບສະໜູນການເຂົ້າເຖິງການບໍລິການທາງດ້ານການເງິນ, ❹ ກອງປະຊຸມໃຫຍ່ ສະມາຊິກ ສະມາຄົມສະຖາບັນການເງິນຈຸລະພາກ ຄັ້ງທີ II ແລະ ❺ ກອງປະຊຸມສະຫຼຸບຜົນງານ ແລະ ປິດໂຄງການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃຫ້ຫຼາຍຂຶ້ນ (MAFIPP) ແລະ ❻ ຈັດກອງປະຊຸມສຳມະນາລະຫວ່າງ ສຄຄຊ ແລະ ຄຄຊ ສປ.ຈີນ ໃນຫົວຂໍ້: "ການສ້າງຕັ້ງສູນໃຫ້ຄວາມຮູ້ກ່ຽວກັບຕະຫຼາດທຶນ" ແລະ "ການສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບ"
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກຄະນະຜູ້ບໍລິຫານ ທະນາຄານ ຫວຽດຕິນ ແລະ ຄະນະເອກະອັກຄະລັດຖະທູດ ສະຫະພາບເອີຣົບ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນຳສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈຳປີ 2019 ທີ່ໄດ້ກຳນົດໄວ້;
- ສືບຕໍ່ຕິດຕາມການທົດລອງ ລະບົບອັດຕາດອກເບ້ຍສະເລ່ຍຖ່ວງນ້ຳໜັກ ແລະ ຕິດຕັ້ງໂປຣແກຣມດຳເນີນທຸລະກຳຕະຫຼາດລະຫວ່າງທະນາຄານ ໄລຍະ 02 ພ້ອມທັງກະກຽມແຜນຈັດກອງປະຊຸມເຜີຍແຜ່ວຽກງານ CIB ໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ສືບຕໍ່ກະກຽມເງື່ອນໄຂໃຫ້ແກ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປີ 2018.
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສະພາແຫ່ງຊາດສະໄໝສາມັນເທື່ອທີ່ 6 ຊຸດທີ VIII ຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ❷ ກອງປະຊຸມສ່ອງແສງສາຍລັດປະຈຳເດືອນ ພະຈິກ 2018, ❸ ກອງປະຊຸມປຶກສາຫາລືກ່ຽວກັບບັນຫາເສດຖະກິດມະຫາພາກ ເພື່ອກະກຽມເນື້ອໃນ ໃນການເຮັດວຽກກັບຄະນະຊ່ວຍຊານຂອງປະເທດ ສສ ຫວຽດນາມ ແລະ ກອງປະຊຸມຫາລື ກ່ຽວກັບການສ້າງຕັ້ງສະມາຄົມປະເມີນມູນຄ່າຊັບສິນ ຮ່ວມກັບບໍລິສັດປະເມີນມູນຄ່າຊັບສິນ 03 ແຫ່ງ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ.
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ທ່ານ Jonathan C.Dunn ຜູ້ຕາງໜ້າຫ້ອງການ IMF ປະຈຳ ສປປ ລາວ ແລະ ສສ. ຫວຽດນາມ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

**ເພັດສະຖາພອນ ແກ້ວວົງວິຈິດ**